PA
-ແມ່ ຈູ ແກ່
13/3 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 10 /ທກ
ນະຄອນຫຼວງວຽງຈັນ, ວັນທີ: 11 MAR 2015

ສຳນັກງານ ຄຄຊ
ຮັບ ເລກທີ 276
ວັນທີ 13 MAR 2015
ໂທລະສັບ 021 217770

# ລາຍງານການເຄື່ອນໄຫວປະຈຳອາທິດ
## ທີ 23/02/2015 ຫາ 27/02/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນນັກລົງທຶນບໍ່ໝັ້ນໃຈຕໍ່ທິດທາງການແກ້ໄຂບັນຫາໜີ້ສິນຂອງຂົງເຂດເອີຣົບ ພາຍຫຼັງການເຈລະຈາກ່ຽວກັບບັນຫາໜີ້ສິນລະຫວ່າງສະຫະພາບເອີຣົບກັບເກຼັກນັ້ນ ເຢຍລະມັນປະຕິເສດຂໍ້ຮ້ອງຂໍຂອງເກຼັກໃນການຕໍ່ອາຍຸຂໍ້ຕົກລົງເງິນກູ້ຂອງຂົງເຂດເອີຣົບອອກໄປອີກ 6 ເດືອນ ຊຶ່ງການປະຕິເສດດັ່ງກ່າວອາດເຮັດໃຫ້ເກຼັກປະເຊີນກັບບັນຫາການຂາດດຸນງົບປະມານເພີ່ມຂຶ້ນ. ນອກກັບດັດຊະນີພາກການຜະລິດຂອງຍີ່ປຸ່ນຫຼຸດລົງເປັນ 51,5 ໃນເດືອນ 2/2015 ຈາກ 52,2 ໃນເດືອນຜ່ານມາ. ໃນຂະນະທີ່, ຈຳນວນຜູ້ຂໍສະຫວັດດີການຫວ່າງງານຄັ້ງທຳອິດຂອງສະຫະລັດໃນອາທິດທີ 14/2/2015 ຫຼຸດລົງເປັນ 283.000 ຄົນ ຈາກ 304.000 ຄົນ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 17/02/2015 | ອາທິດນີ້ 24/02/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,1258 | 1,1337 | -0,70% |
| ໂດລາ/ເຢນ | 118,23 | 117,66 | 0,48% |
| ໂດລາ/ບາດ | 32,55 | 32,57 | -0,05% |
| ໂດລາ/ເປໂຊ | 44,10 | 44,17 | -0,15% |
| ໂດລາ/ຣູເປັຍ | 12.480,56 | 12.682,00 | -1,59% |
| ໂດລາ/ໂດລາສິງກະໂປ | 1,3432 | 1,3532 | -0,74% |
| ໂດລາ/ຢວນ | 6,2482 | 6,2594 | -0,18% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 4,24% ຈາກ 45,16 ໂດລາ/ບາເຣວ ມາເປັນ 47,07 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງໂລກຫຼຸດລົງ ເປັນຕົ້ນແມ່ນສະຫະລັດ ແລະ ສິງກະໂປ ເນື່ອງຈາກຄັງສຳຮອງນ້ຳມັນທາງການຄ້າຂອງສະຫະລັດ ໃນອາທິດທີ 13/2/2015 ເພີ່ມຂຶ້ນ 7,71 ລ້ານບາເຣວ ຈາກເພີ່ມຂຶ້ນ 4,86 ລ້ານບາເຣວ ໃນອາທິດຜ່ານມາ ແລະ ຄັງສຳຮອງນ້ຳມັນທາງການຄ້າຂອງສິງກະໂປ ປະຈຳອາທິດທີ 16/02/2015 ເພີ່ມຂຶ້ນ 1,44 ລ້ານບາເຣວ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,38% ຈາກ 1.278,93 ໂດລາ/ອອນ ມາເປັນ 1.274,11 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ພາຍຫຼັງລາຄາຄຳໄດ້ເພີ່ມຂຶ້ນໃນຊ່ວງເທດສະການປີໃໝ່ຈີນ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,05% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,001% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,15% ສຳລັບອັດຕາ ທທກ ແຕ່ອ່ອນຄ່າລົງ 0,07% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,45% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,20% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,05% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,30% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 16/02/2015 | | | ອາທິດນີ້ 23/02/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.089,43 | 8.125,95 | 8.110,49 | 8.092,10 | 8.122,95 | 8.114,78 | -0,03% | 0,04% | -0,05% |
| ບາດ | 250,15 | 251,25 | 250,78 | 250,05 | 251,09 | 250,39 | 0,04% | 0,07% | 0,15% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.105,02 | 8.150,00 | 8.127,51 | 8.107,23 | 8.147,67 | 8.127,45 | -0,03% | 0,03% | 0,001% |
| ບາດ | 249,78 | 251,53 | 250,65 | 250,08 | 251,60 | 250,84 | -0,12% | -0,03% | -0,07% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,19% | 0,30% | 0,21% | 0,19% | 0,30% | 0,16% | | | |
| ບາດ | -0,15% | 0,11% | -0,05% | 0,01% | 0,20% | 0,18% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ຫຼຸດລົງ 0,82% ທຽບໃສ່ວັນທີ 20/02/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 49,76%.
- ປະລິມານເງິນ $M_2$ ຫຼຸດລົງ 0,06% ເມື່ອທຽບໃສ່ວັນທີ 20/02/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,79%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 23/02/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 6,12 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 41,54 ລ້ານໂດລາ ແລະ ຂາຍໂດລາໄດ້ 35,42 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 457,20 ລ້ານບາດ (ໃນນີ້ ຊື້ບາດໄດ້ 413,54 ລ້ານບາດ ແລະ ຂາຍບາດ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ໄດ້ 870,73 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 27,65% ແລະ ຫຼຸດລົງ 31,28% ສຳລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 16,62 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 210,42 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈຳນວນ 42,05 ລ້ານໂດລາ ແຕ່ຂາຍບາດສຸດທິ ຈຳນວນ 2,45 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 17,71 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 554,62 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 16/02/2015 | | ອາທິດທີ 23/02/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 18,97 | 329,76 | 13,72 | 314,76 | -27,68% | -4,55% |
| - ທ/ຄທຸລະກິດອື່ນໆ | 47,58 | 284,64 | 27,82 | 98,77 | -41,53% | -65,30% |
| ລວມຊື້: | 66,55 | 614,41 | 41,54 | 413,54 | -37,58% | -32,69% |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 15,80 | 225,39 | 21,12 | 234,89 | 33,72% | 4,21% |
| - ທ/ຄທຸລະກິດອື່ນໆ | 24,02 | 1.029,14 | 14,30 | 635,85 | -40,48% | -38,22% |
| ລວມຂາຍ: | 39,82 | 1.254,53 | 35,42 | 870,73 | -11,04% | -30,59% |
| ຊື້-ຂາຍສຸດທິ ທທກ | 26,73 | -640,13 | 6,12 | -457,20 | -77,11% | -28,58% |
| ຜິດດ່ຽງ ຊື້-ຂາຍ | 40,16 | -104,19 | 14,73 | -110,56 | -2543,72% | -637,10% |
| ມູນຄ່າການຊື້-ຂາຍ | 106,36 | 1.868,94 | 76,96 | 1.284,27 | -27,65% | -31,28% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,10 | 75,00 | 50,00 | 42,56 | | |
| - ທຫລ ຂາຍໃຫ້ ທທກ | 12,95 | 154,00 | 7,95 | 45,00 | | |
| ຊື້-ຂາຍສຸດທິ ທຫລ | -12,85 | -79,00 | 42,05 | -2,45 | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 13,61 | 255,33 | 16,62 | 210,42 | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,12 | 933,32 | 0,09 | 569,62 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 28,54 | 0,00 | 17,80 | 15,00 | | |
| ຊື້-ຂາຍສຸດທິ ທຫລ | -28,42 | 933,32 | -17,71 | 554,62 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 02/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 2,00% ຫຼຸດລົງ 0,04% ຈາກ 2,04% ໃນເດືອນ 01/2015.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນໍາໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນໍາເງິນຕາຕ່າງປະເທດອອກນອກ ສປປ ລາວ ຈໍານວນ 65,38 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 20,7% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 630 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 27,34% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 442,55 ຕື້ກີບ ຫຼຸດລົງ 25,59% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (20-26/02/2015) ມີຈໍານວນ 1.046 ຄັ້ງ ໂດຍມີມູນຄ່າ 118,34 ຕື້ກີບ ຫຼຸດລົງ 68,94% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 378 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.413,65 ຈຸດ ເພີ່ມຂຶ້ນ 0,82% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 187.728 ຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 1,25 ຕື້ກີບ ຫຼຸດລົງ 46,42% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 67,17% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.910 ກີບ/ຮຸ້ນ ເພີ່ມຂຶ້ນ 10 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 34.758 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 240,16 ລ້ານກີບ ຫຼຸດລົງ 69,11% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 59,32% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,48%[2].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.086 ກີບ/ຮຸ້ນ ເພີ່ມຂຶ້ນ 21 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 130.813 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 926,92 ລ້ານກີບ ຫຼຸດລົງ 35,77% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 69,39% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,28%[3].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາປິດຢູ່ທີ່ 10.000 ກີບ/ຮຸ້ນ ບໍ່ປ່ຽນແປງເມື່ອທຽບໃສ່ອາທິດທີ່ຜ່ານມາ ຊຶ່ງໃນອາທິດນີ້ ແມ່ນບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.852 ກີບ/ຮຸ້ນ ຫຼຸດລົງ 59 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 22.157 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 85,35 ລ້ານກີບ ຫຼຸດລົງ 26,96% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 37,46% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສໍາເລັດການເອົາລະຫັດສາຂາ ແລະ ໜ່ວຍບໍລິການຂອງທະນາຄານເອຊີລີດາ ແລະ ອິນໂດຈີນເຂົ້າລະບົບ MIS ສາຂາພາກ;
- ສໍາເລັດການຈັດກອງປະຊຸມ: ❶ ກອງປະຊຸມສໍາມະນາຮ່ວມກັບ IFC ໃນຫົວຂໍ້ "ASEAN CG Scorecard" ທີ່ໂຮງແຮມລາວພລາຊ່າ, ❷ ກອງປະຊຸມສະຫຼຸບວຽກງານ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ປະຈໍາປີ 2014 ທີ່ ໂຮງແຮມ ລາວພລາຊາ ນະຄອນຫຼວງວຽງຈັນ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສໍາເລັດການຈັດງານ "ເປີດໂລກແຫ່ງການລົງທຶນ 2015 (Investment Gateway 2015)" ເພື່ອໃຫ້ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນແກ່ສັງຄົມ ທີ່ຕະຫຼາດຫຼັກຊັບລາວ;
- ສໍາເລັດການປະຊຸມປຶກສາຫາລືກັບກົມກ່ຽວຂ້ອງ ກ່ຽວກັບກໍາໄລ ທີ່ໄດ້ຮັບເກີນແຜນ ແລະ ແຜນການລາຍຮັບ-ລາຍຈ່າຍປະຈໍາປີ 2015;
- ສໍາເລັດການເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມສໍາມະນາໃນຫົວຂໍ້ "ມາດຕະຖານດ້ານການບັນຊີ ແລະ ລາຍງານການເງິນ" ທີ່ ສະຖາບັນການທະນາຄານ, ❷ ກອງປະຊຸມຄະນະກໍາມະການສ້າງຄວາມອາດສາມາດຄັ້ງທີ 08 ແລະ ກອງປະຊຸມຄະນະກໍາມະການລະດັບສູງຄັ້ງທີ 09 ຈັດຂຶ້ນທີ່ ບາງກອກ ປະເທດໄທ, ❸ ກອງປະຊຸມກອງເລຂາວຽກງານການເຊື່ອມໂຍງເສດຖະກິດກັບສາກົນຄັ້ງທີ 57 ທີ່ ກະຊວງອຸດສາຫະກໍາ ແລະ ການຄ້າ, ❹ ກອງປະຊຸມປຶກສາຫາລື ກ່ຽວກັບໃບທະບຽນວິສາຫະກິດຂອງ ສູນຊໍາລະສະສາງລາວ (LCPN) ທີ່ ທຫລ;
- ສໍາເລັດການເຂົ້າຮ່ວມຝຶກອົບຮົມ ໃນຫົວຂໍ້ "ການຄຸ້ມຄອງວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການຕໍ່ການຮ້າຍຕໍ່ລະບົບທະນາຄານ" ຢູ່ປະເທດ ມາເລເຊຍ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈໍານວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າວິທີການໃຫ້ Browsers ປະຕິເສດຜູ້ໃຊ້ຢູ່ເບື້ອງທະນາຄານທຸລະກິດ ບໍ່ໃຫ້ເຂົ້າຫາລະບົບໄດ້ ຖ້າບໍ່ໄດ້ຮັບ CA ແລະ ບໍ່ໃຫ້ລະບົບແຈກ Public Key ໃຫ້ຜູ້ໃຊ້ແບບອັດຕະໂນມັດ, ❷ ຄົ້ນຄວ້າການອອກໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ປະເພດນາຍໜ້າຊື້-ຂາຍຫຼັກຊັບ, ❸ ຄົ້ນຄວ້າບົດບາດ ແລະ ໜ້າທີ່ຂອງໜ່ວຍງານການໃຫ້ບໍລິການຄໍ້າປະກັນການອອກຈໍານາຍຮຸ້ນກູ້ ເປັນສະກຸນເງິນທ້ອງຖິ່ນ (Credit Guarantee and Investment Facility), ❹ ຄົ້ນຄວ້າເນື້ອໃນຂອງຫຼັກການບາແຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການບາແຊວ 2, ❺ ຄົ້ນຄວ້າການສະເໜີຂອງ IMF ສະເໜີແຕ່ງຕັ້ງພະນັກງານ ທຫລ ເຂົ້າຮ່ວມໂຄງການສະໜອງຂໍ້ມູນດ້ານນິຕິກໍາຂອງທະນາຄານກາງ;
- ກະກຽມກອງປະຊຸມກັບສະມາຊິກຂອງສູນຂໍ້ມູນສິນເຊື່ອ ແລະ ສະມະຊິກ ຂອງລະບົບການໂອນເງິນມູນຄ່າສູງ (RTGS) ຕາມທິດຊີ້ນໍາຂອງທ່ານ ຜູ້ວ່າການ ທຫລ.

**ຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພາສີ ພິມມະກອນ